Australian BORDER FORCE

# ຂໍ້ມູນ ສໍາຄັນ ກ່ຽວກັບ ການກັກໂຕ ຕາມຄໍາສັ່ງ ສໍາລັບຜູ້ໂດຍສານ ທີ່ເດີນທາງໄປອອສເຕຣເລັຍ

**ຂໍ້ມູນ ສໍາຄັນກ່ຽວກັບການຈັດການກັກໂຕຕາມຄໍາສັ່ງ ສໍາລັບຜູ້ໂດຍສານທີ່ມາຮອດອອສເຕຣເລັຍ**
**13 ສິງຫາ 2020**

ໃນການໂຕ້ຕອບ ຕໍ່ການລະບາດຂອງພະຍາດ COVID-19, ອອສເຕຣເລັຍໄດ້ມີຂໍ້ ຈໍາກັດການເດີນທາງ ແລະ ຂໍ້ກໍານົດການກັກໂຕຕາມຄໍາສັ່ງ

**ຜູ້ໂດຍສານທຸກຄົນທີ່ເດີນທາງມາຮອດອອສເຕຣເລັຍແມ່ນຕ້ອງໄດ້ກັກໂຕເອງຕາມຄໍາສັ່ງເປັນເວລາ 14 ວັນຢູ່ໃສະຖານທີ່ແຫ່ງທໍາອິດຂອງພວກເຂົາທີ່ມາຮອດອອສເຕຣເລັຍ.**

ນັກທ່ອງທ່ຽວຈະໄດ້ຮັບການຈັດຫາທີ່ພັກອັນເໝາະສົມໃນລະຍະນີ້ແລະຈະບໍ່ໄດ້ຮັບອະນຸຍາດໃຫ້ເດີນທາງພາຍໃນປະເທດ (ລວມທັງທີ່ຢູ່ອາໃສຂອງພວກເຂົາ) ຫຼື ສືບຕໍ່ການເຊື່ອມຕໍ່ພາຍໃນປະເທດຈົນກ່ວາລະຍະການກັກໂຕຕາມຄໍາສັ່ງ 14 ວັນໄດ້ສິ້ນສຸດລົງ.

ຣັຖບານຂອງ ຣັດ ແລະ ອານາເຂດ, ດ້ວຍການສະໜັບ ສະໜູນ ຈາກ ຣັຖບານແຫ່ງອອສເຕຣເລັຍ, ຄວບຄຸມການຈັດແຈງການກັກໂຕ . ໃນ ຣັດ ແລະ ອານາເຂດສ່ວນໃຫຍ່, ທ່ານຈະຖືກຮຽກຮ້ອງໃຫ້ປະກອບສ່ວນໃນຄ່າໃຊ້ຈ່າຍໃນການກັກໂຕ. ຂໍ້ມູນເພີ້ມເຕີມສາມາດຫາພົບໄດ້ຢູ່ໃນເວັບໄຊຕ໌ ສາທາຣະສຸກ ຂອງຣັຖບານ ຣັດ ແລະ ອານາເຂດ.

**ຜູ້ໂດຍສານຜ່ານ**
ຜູ້ໂດຍສານຜ່ານລະຫວ່າງປະເທດທີ່ເດີນທາງເຂົ້າມາປະເທດອອສເຕຣເລັຍສາມາດເດີນທາງຕໍ່ຖ້ຽວບິນຕ່າງປະເທດອີກເສັ້ນນຶ່ງທີ່ອອກຈາກເມືອງທີ່ທ່ານເຂົ້າມາ. ບັນດາຜູ້ໂດຍສານຜ່ານ ຕ້ອງ

- ຢູ່ທີ່ສະໜາມບິນຖ້າທ່ານຕ້ອງລໍຖ້າຖ້ຽວບິນຕໍ່ໄປຂອງທ່ານເຖິງ 8 ຊົ່ວໂມງ
- ໄປກັກໂຕຕາມຄໍາສັ່ງຢູ່ສະຖານທີ່ທີ່ຣັດກໍານົດໄວ້ຖ້າການລໍຖ້າຖ້ຽວບິນຕໍ່ໄປຂອງທ່ານແມ່ນຕັ້ງແຕ່ 8 ຫາ 72 ຊົ່ວໂມງ

ຜູ້ໂດຍສານຜ່ານບໍ່ສາມາດເດີນທາງພາຍໃນປະເທດອອສເຕຣເລັຍ ເຖິງແມ່ນວ່າຈະໄດ້ໄປຫາຖ້ຽວບິນສາກົນທີ່ອອກເດີນທາງໃນເມືອງອື່ນ

**ສິ່ງທີ່ຄາດຫວັງເມື່ອຮອດອອສເຕຣເລັຍ**

- ທ່ານຈະຕ້ອງປະຕິບັດຕາມແນວທາງທີ່ພະນັກງານເທິງເຄື່ອງບິນ ແລະ ເຈົ້າ ໜ້າທີ່ຣັຖບານໃຫ້ໄວ້ເມື່ອທ່ານມາຮອດອອສເຕຣເລັຍ.
- ທ່ານຈະຮັບເອົາກະເປົ໋າເດີນທາງຂອງທ່ານແລະຜ່ານຂັ້ນຕອນການກວດການເຂົ້າເມືອງຕາມປົກກະຕິ (ພາສີ, ການກວດຄົນເຂົ້າເມືອງແລະ ຄວາມປອດໄພທາງຊີວະພາບ).
- ຫຼັງຈາກຜ່ານການກວດການເຂົ້າເມືອງແລ້ວ, ເຈົ້າ ໜ້າທີ່ຣັຖບານ ຈະນໍາທ່ານໄປຫາຣົດໂດຍສານເຊິ່ງຈະພາທ່ານໄປບ່ອນພັກເຊົາຂອງທ່ານ.
- ທ່ານອາດຈະຕ້ອງລໍຖ້າເປັນລະຍະເວລາດົນຈົນກວ່າຈະມາຮອດບ່ອນພັກເຊົາຂອງທ່ານ. ເຈົ້າໜ້າທີ່ຣັຖບານຈະພະຍາຍາມເຮັດໃຫ້ເວລາລໍຖ້າເຫຼົ່ານີ້ມີຄວາມສະດວກສະບາຍເທົ່າທີ່ເປັນໄປໄດ້. ຂໍຂອບໃຈໃນຄວາມຮ່ວມມື ແລະ ຄວາມອົດທົນຂອງທ່ານ.

**ການຈັດແຈງຕ່າງໆສໍາລັບລະຍະເວລາກັກໂຕ 14 ວັນຂອງທ່ານ**

- ເຈົ້າໜ້າທີ່ຣັຖບານຢູ່ສະຖານທີ່ພັກກັກໂຕຈະລໍຖ້າທ່ານມາຮອດ. ພວກເຂົາຍິນດີທີ່ຈະຕອບທຸກຄໍາຖາມທີ່ທ່ານອາດຈະມີຫຼັງຈາກມາຮອດຂອງທ່ານແລະຊ່ວຍທ່ານໃນລະຍະການກັກໂຕຂອງທ່ານ.
- ທີ່ພັກອາໃສຈະມີສິ່ງອໍານວຍຄວາມສະດວກ ແລະ ການບໍລິການທັງໝົດ ທີ່ທ່ານຈະຕ້ອງການໃນລະຍະທີ່ທ່ານຢູ່. ທີ່ພັກອາໃສຈະປະກອບມີທີ່ພັກທີ່ປອດໄພ ແລະ ຖືກສຸຂະອະນາໄມ, ອາຫານແລະນໍ້າແລະການຊ່ວຍເຫຼືອດ້ານການແພດ.
- ຖ້າທ່ານຄວນມີຄວາມຕ້ອງການດ້ານສຸຂະພາບ, ເຊັ່ນໃບສັ່ງຢາຈາກແພດ ສໍາລັບຢາປິ່ນປົວປະຈໍາ, ຈະມີການຈັດການເພື່ອ ອໍານວຍຄວາມສະດວກໃຫ້ແກ່ຄວາມຕ້ອງການເຫຼົ່ານີ້.

Australian BORDER FORCE

# ຂໍ້ມູນ ສໍາຄັນ ກ່ຽວກັບ ການກັກໂຕ ຕາມຄໍາສັ່ງ ສໍາລັບຜູ້ໂດຍສານ ທີ່ເດີນທາງໄປອອສເຕຣເລັຍ

- ທ່ານອາດຈະໄດ້ຮັບການກວດຫາພະຍາດ COVID-19 ໃນ 48 ຊົ່ວໂມງ ທໍາອິດ ແລະ ຫຼັງຈາກນັ້ນໃນລະຫວ່າງວັນທີ 10 ຫາ 12 ຂອງການກັກໂຕ. ຖ້າທ່ານປະຕິເສດການກວດ, ທ່ານອາດຈະຕ້ອງກັກກັນເປັນລະຍະເວລາດົນກວ່ານັ້ນ. ການຈັດການກວດທີ່ແນ່ນອນຂຶ້ນກັບ ຣັດ ແລະ ອານາເຂດຕ່າງໆ.
- ພາຍໃຕ້ກົດໝາຍ ວ່າດ້ວຍ ຄວາມປອດໄພທາງຊີວະພາບ ປີ 2015 ແລະ ກົດໝາຍຂອງຣັດທີ່ບັງຄັບໃຊ້, ທ່ານຈະຕ້ອງຢູ່ໃນບ່ອນພັກເຊົາທີ່ໄດ້ຮັບການຈັດໃຫ້ຈົນກວ່າທ່ານຈະໄດ້ຮັບການແຈ້ງຈາກທາງການແພດເພື່ອເຂົ້າສູ່ຊຸມຊົນອອສເຕຣເລັຍ.

ການຈັດການເຫຼົ່ານີ້ຈະຖືກບັງຄັບໃຊ້ໂດຍຣັດຖະບານຂອງ ຣັດ ແລະ ອານາເຂດ ແລະ ໄດ້ຮັບການສະໜັບ ສະໜູນ ຈາກ ບັນດາອົງການຂອງຣັຖບານອອສເຕຣເລັຍ.

**ການສິ້ນສຸດລະຍະເວລາກັກໂຕ 14 ວັນຂອງທ່ານ**

ເມື່ອທ່ານໄດ້ສິ້ນສຸດລະຍະການກັກໂຕຕາມຄໍາສັ່ງແລ້ວ, ທ່ານສາມາດເດີນທາງພາຍໃນອອສເຕຣເລັຍໄດ້. ກະລຸນາຮັບຊາບວ່າບັນດາ ຣັດ ແລະ ອານາເຂດ ອາດຈະມີຂໍ້ ກໍານົດໃນການເຂົ້າແລະການກັກໂຕ. ທ່ານຄວນກວດເບິ່ງຂໍ້ກໍານົດການເຂົ້າແລະການກັກໂຕ ສໍາລັບແຕ່ລະ ຣັດ ແລະ ອານາເຂດກ່ອນການເດີນທາງ.

ເວັບໄຊຕ໌ຂອງ ກະຊວງສາທາລະນະສຸກ ອອສເຕຣເລັຍ ກວມເອົາລິງກ໌ຂໍ້ມູນຂອງ ຣັດ ແລະ ອານາເຂດ ກ່ຽວກັບຂໍ້ຈໍາກັດການເດີນທາງ
*https://www.health.gov.au/news/health-alerts/novel-coronavirus-2019-ncov-health-alert/coronavirus-covid-19-restrictions/coronavirus-covid-19-advice-for-international-travellers#quarantine-for-incoming-travellers*